*"ບົດບາດ ຂອງກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ແມ່ນເພື່ອສະໜອງຂໍ້ມູນຂ່າວສານທີ່ກ່ຽວກັບທີ່ດິນ ແລະ ເຮັດໜ້າທີ່ເຊື່ອມຕໍ່ລະຫວ່າງເຄືອຂ່າຍ ແລະ ເປັນຕົວແບບໃນການປະຕິບັດຂັ້ນຊຸມຊົນເພື່ອພ້ອມກັນປະຕິບັດກິດຈະກໍາທີ່ກ່ຽວຂ້ອງຂອງສະມາຊິກ ແລະ ຮັບປະກັນສິດຄອບຄອງນໍາໃຊ້ທີ່ດິນຂອງປະຊາຊົນ."*

## ກ່ຽວກັບພວກເຮົາ

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ແມ່ນເຄືອຂ່າຍໜຶ່ງຂອງອົງການຈັດຕັ້ງທາງສັງຄົມທີ່ໄດ້ເກີດຂຶ້ນໃນ ສປປ ລາວ ນັບແຕ່ປີ 2007 ເປັນຕົ້ນມາ. ສະມາຊິກຂອງ LIWG ປະກອບມີອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທາງສັງຄົມ ລວມທັງສ່ວນບຸກຄົນທີ່ເຮັດວຽກດ້ານທີ່ດິນຢູ່ໃນ ສປປ ລາວ. ພາຍໃນເຄືອຂ່າຍປະກອບມີສະມາຊິກຫຼັກຫຼາຍກວ່າ 80 ທ່ານ ເຊິ່ງເປັນຕົວແທນຈາກອົງການຈັດຕັ້ງ ເກືອບ 40 ອົງການ ແລະ ສະມາຊິກສະໜັບສະໜູນແມ່ນມີຫຼາຍກວ່າ 180 ທ່ານ. ບັນດາກິດຈະກໍາຕ່າງໆຂອງ LIWG ແມ່ນມີການດໍາເນີນການໂດຍຜ່ານກອງເລຂາ ແລະ ຊີ້ນໍາໂດຍຄະນະກໍາມະການເຊິ່ງເປັນຄະນະທີ່ມາຈາກການລົງຄະແນນເລືອກຕັ້ງ ໂດຍບັນດາສະມາຊິກຂອງ LIWG .

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ໄດ້ຖືກສ້າງຕັ້ງຂຶ້ນເພື່ອວ່າບັນດາສະມາຊິກຈະສາມາດແລກປ່ຽນຂໍ້ມູນເຊິ່ງກັນ ແລະ ກັນໄດ້ກ່ຽວກັບປະເດັນເລື່ອງທີ່ດິນໂດຍສະເພາະ ແມ່ນປະເດັນທີ່ກໍາລັງເກີດຂຶ້ນຢ່າງແຜ່ຫຼາຍ ທີ່ກ່ຽວຂ້ອງກັບບັນດາໂຄງການລົງທຶນໂດຍກົງຈາກຕ່າງປະເທດ ແລະ ຄວາມກັງວົນກ່ຽວກັບຜົນກະທົບດ້ານລົບ ຕໍ່ການດໍາລົງຊີວິດຂອງບັນດາຊຸມຊົນໃນເຂດຊົນນະບົດ; ແລະ ກໍ່ເພື່ອການລິເລີ່ມຮ່ວມກັນໃນການພັດທະນາຊ່ອງທາງການແກ້ໄຂບາງປະເດັນດັ່ງກ່າວນັ້ນ. ວຽກງານພື້ນຖານຂອງ LIWG ແມ່ນການຮ່ວມມືກັບຫລາຍພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ອົງການຈັດຕັ້ງທາງສັງຄົມ, ພາກສ່ວນລັດຖະບານ, ບັນດາອົງການຄູ່ຮ່ວມພັດທະນາ, ຂະແໜງການເອກະຊົນ ແລະ ສິ່ງສໍາຄັນແມ່ນບັນດາຊຸມຊົນທ້ອງຖິ່ນ.

## ພວກເຮົາ ເຮັດວຽກແນວໃດ?

ບັນດາສະມາຊິກຂອງ LIWG ແມ່ນຕົວແທນຂອງບັນດາອົງການຈັດຕັ້ງທາງສັງຄົມ ແລະ ທີ່ປຶກສາເອກະລາດ ທີ່ເຮັດວຽກປະເດັນທີ່ດິນ ໃນ ສປປ ລາວ ແລະ ທັງເປັນຜູ້ທີ່ເຂົ້າຮ່ວມບາງວຽກງານທີ່ກ່ຽວຂ້ອງ ແລະ ຜູ້ທີ່ມີຄວາມປະສົງຢາກຈະເຂົ້າຮ່ວມກິດຈະກໍາຂອງ LIWG.
ກຸ່ມທີ່ເຮັດໜ້າທີ່ສະເພາະ ຫລື ກຸ່ມວິຊາການ ແມ່ນຈະມີການແຕ່ງຕັ້ງຂຶ້ນເພື່ອປຶກສາຫາລືບາງຫົວເລື່ອງສະເພາະ ຫລື ປຶກສາຫາລືບາງບັນຫາສະເພາະ ເພື່ອພັດທະນາຍຸດທະສາດ ແລະ ວິທີການປະຕິບັດຢ່າງເປັນເອກະພາບ ອີງຕາມຄວາມເປັນໄປໄດ້.

- ທ່ານສົນໃຈເປັນສະມາຊິກຂອງ LIWG ບໍ?
- ທ່ານສົນໃຈກ່ຽວກັບວຽກງານຂອງພວກເຮົາບໍ?
- ທ່ານມີຄໍາຖາມກ່ຽວກັບປະເດັນທີ່ດິນໃນປະເທດລາວບໍ?
- ທ່ານສົນໃຈ ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບປະເດັນທີ່ ດິນໃນລາວບໍ?

### ຕິດຕໍ່ສອບຖາມຂໍ້ມູນກັບພວກເຮົາໄດ້ທີ່:


+856 30 981 5657

info@laolandinfo.org

www.laolandinfo.org

Land Information Working Group


# ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG

## ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ



*ແນໃສ່ສົ່ງເສີມ ຄວາມເຂົ້າໃຈ ແລະ ຄວາມຮູ້ທ່ວງທັນໃນດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມທີ່ກ່ຽວກັບການນໍາໃຊ້ທີ່ດິນໃນໂຄງການຕ່າງໆ ໂດຍການເກັບກໍາ ແລະ ແລກປ່ຽນຂໍ້ມູນຂ່າວສານ, ການສົນທະນາປຶກສາຫາລື ແລະ ການຄົ້ນຄວ້າວິໄຈ*



## ເປັນຫຍັງຈຶ່ງມີ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ?

ສປປ ລາວ ຍັງຈະສືບຕໍ່ໄດ້ຮັບຜົນປະໂຫຍດຈາກຊັບພະຍາກອນທຳມະຊາດທທີ່ຂ້ອນຂ້າງກວ້າງຂວາງ ແລະ ອຸດົມຮັ່ງມີ. ໃນໄລຍະ 15 ປີຜ່ານມາ ຊັບພະຍາກອນເຫລົ່ານີ້ໄດ້ຖືກນຳໃຊ້ຫລາຍຂຶ້ນເລື້ອຍໆ ໂດຍນັກລົງທຶນໂດຍກົງຈາກຕ່າງປະເທດດ້ວຍການສະໜັບສະໜູນຈາກບັນດາບຸກຄົນພາຍໃນປະເທດໃນຂົງເຂດການຂຸດຄົ້ນບໍ່ແຮ່,ໄຟຟ້າພະລັງນ້ຳ ແລະ ການຜະລິດດ້ານກະສິກຳ. ຍ້ອນແນວນັ້ນການແຂ່ງຂັນການນຳໃຊ້ທີ່ດິນ, ນ້ຳ ແລະ ປ່າໄມ້ ລະຫວ່າງບັນດານັກລົງທຶນຂະໜາດໃຫຍ່ ແລະ ບັນດາຊຸມຊົນຢູ່ເຂດຊົນນະບົດຈຶ່ງເພີ່ມຂຶ້ນຢ່າງຫຼວງຫຼາຍ. ການເພີ່ມຂຶ້ນຂອງການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ເພື່ອພັດທະນາດ້ານເສດຖະກິດນັ້ນໄດ້ ສ້າງໂອກາດຫຼາຍຢ່າງໃຫ້ແກ່ຊຸມຊົນ ເພື່ອປັບປຸງຊີວິດການເປັນຢູ່, ການເຂົ້າເຖິງໂຄງຮ່າງຂັ້ນພື້ນຖານ, ສ້າງໂອກາດທາງດ້ານອາຊີບ, ການດຳເນີນກິດຈະກຳທີ່ເປັນມິດແກ່ສິ່ງແວດລ້ອມ ແລະ ການມີສ່ວນຮ່ວມເທົ່າທຽມກັນຫຼາຍຂຶ້ນໃນຂະບວນການພັດທະນາ.

ແຕ່ໃນຂະນະດຽວກັນ ຄວາມກັງວົນກ່ຽວກັບປະເດັນທີ່ດິນ ທີ່ສົ່ງຜົນກະທົບທາງດ້ານລົບຕໍ່ວິຖີຊີວິດຂອງບັນດາຊົນເຜົ່າກຸ່ມນ້ອຍພັດເພີ່ມຂຶ້ນ. ບັນດາຊາວກະສິກອນຂະໜາດນ້ອຍ ກໍ່ຖືກຄຸມຄາມຈາກການສຳປະທານທີ່ດິນເພື່ອການຜະລິດກະສິກຳຂະໜາດໃຫຍ່. ນອກນັ້ນຍັງເກີດມີຄວາມສ່ຽງຫຼາຍຢ່າງທີ່ເກີດຂຶ້ນ, ໂດຍສະເພາະການເພີ່ມຂຶ້ນຂອງ ການເຄື່ອນຍ້າຍຂອງຊາວໜຸ່ມອອກຈາກເຂດຊົນນະບົດເຂົ້າສູ່ເຂດຕົວເມືອງ, ການຫລຸດລົງທາງດ້ານຈຳນວນ ແລະ ຜະລິດຕະພັນຈາກປ່າໄມ້ ແລະ ພາໃຫ້ເກີດມີການເຊື່ອມເສຍຕໍ່ທຶນຮອນທາງດ້ານທຳມະຊາດ, ຊັບພະຍາກອນມະນຸດ ແລະ ຄວາມເປັນເອກະລັກທາງດ້ານວັດທະນະທຳ ອັນໄດ້ພາໃຫ້ເກີດມີເສດຖະກິດທີ່ອາໄສຊັບພະຍາກອນທຳມະຊາດແບບບໍ່ຍືນຍົງ ແລະ ມີການຫລຸດລົງຂອງອາຫານ ແລະ ການຄ້ຳປະກັນທາງດ້ານໂພຊະນາການ. ດັ່ງນັ້ນຈຶ່ງມີຄວາມຈຳເປັນອັນຮີບດ່ວນທີ່ຕ້ອງມີການຮ່ວມມື ແລະ ປະສານງານດ້ານຕ່າງໆຈາກພາກສ່ວນກ່ຽວຂ້ອງທັງໝົດ ເພື່ອປ້ອງກັນບໍ່ໃຫ້ສະພາບການເຫລົ່ານີ້ມີຄວາມຮ້າຍແຮງຂຶ້ນຕື່ມອີກ.

*"ສົ່ງເສີມ , ພັດທະນາເຄືອຂ່າຍ ແລະ ຊຸມຊົນໃນການປະຕິບັດຕົວຈິງຢູ່ຂັ້ນພື້ນຖານໃຫ້ມີຄວາມເຂັ້ມແຂງກ່ຽວກັບວຽກງານທີ່ດິນ ພາຍໃນສະມາຊິກຂອງ LIWG ເພື່ອປະກອບສ່ວນເຂົ້າໃນຂະບວນການຕັດສິນໃຈ, ຮ່ວມກັນພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍ."*

## ວິໄສທັດ, ພັນທະກິດ ແລະ ຈຸດປະສົງ

**ວິໄສທັດ:** ບັນດາຊຸມຊົນເຂົ້າເຖິງສິດນຳໃຊ້ທີ່ດິນ ທີ່ຮັບປະກັນ ແລະ ສະເໝີພາບໂດຍມີນະໂຍບາຍທີ່ເປັນທຳ ແລະ ກວມເອົາໝົດທຸກຄົນ ແລະ ນະໂຍບາຍດັ່ງກ່າວຖືກຈັດຕັ້ງປະຕິບັດໂດຍມີ ຄວາມໂປ່ງໃສ ແລະ ມີຂໍ້ມູນສຳລັບການຕັດສິນບັນຫາກ່ຽວກັບການຄຸ້ມຄອງທີ່ດິນເພື່ອຄວາມຍືນຍົງ.

**ພັນທະກິດ:** ສະໜັບສະໜູນ ແລະ ອຳນວຍຄວາມສະດວກ ແກ່ບັນດາອົງການຈັດຕັ້ງທາງສັງຄົມ ແລະ ບັນດາຄູ່ຮ່ວມພັດທະນາ ໃນການປະຕິບັດວຽກງານ ແລະ ສົ່ງເສີມໃຫ້ມີບົດບາດ ຕໍ່ການປຶກສາຫາລື ແລະ ການຮ່ວມມືກັນລະຫວ່າງ ພາກສ່ວນທີ່ກ່ຽວຂ້ອງຕ່າງໆກ່ຽວກັບປະເດັນທີ່ດິນ ໂດຍຜ່ານການສົນທະນາ - ປຶກສາຫາລື ແລະ ດ້ວຍຮູບແບບການເຮັດບົດສຶກສາວິໄຈກ່ຽວກັບ ການຄຸ້ມຄອງ, ນະໂຍບາຍ ແລະ ປະຕິບັດວຽກງານກ່ຽວກັບທີ່ດິນ.

### ຈຸດປະສົງ:

**ການເຊື່ອມຕໍ່**

ສ້າງສາຍສຳພັນ ແລະ ຄວາມເຊື່ອໝັ້ນເຊິ່ງກັນແລະກັນ,ເຮັດໃຫ້ເກີດມີພື້ນທີ່ ແລະ ຊ່ອງທາງການສື່ສານ,ການແລກປ່ຽນຄວາມຮູ້ເພື່ອການປຶກສາຫາລື ແລະ ສົ່ງເສີມການມີສ່ວນຮ່ວມໃນການຄຸ້ມຄອງການນຳໃຊ້ທີ່ດິນ.

**ການມີສ່ວນຮ່ວມ**

ສົ່ງເສີມການປຶກສາຫາລື ແລະ ແລກປ່ຽນ ກ່ຽວກັບນະໂຍບາຍ ລະຫວ່າງບັນດາພາກສ່ວນທີ່ກ່ຽວຂ້ອງເພື່ອປັບປຸງ ການຄ້ຳປະກັນສິດນຳໃຊ້ທີ່ດິນ.

**ການຮ່ວມມືກັນ**

ສົ່ງເສີມການຮ່ວມມືກັນຂອງບັນດາສະມາຊິກ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ ເພື່ອເອົາວຽກງານດ້ານການຄຸ້ມຄ້ອງສິດນຳໃຊ້ທີ່ດິນເຂົ້າໃນວຽກງານຢູ່ຂັ້ນຮາກຖານ.

**ເປົ້າໝາຍ**

ສົ່ງເສີມ ແລະ ຮັກສາວິທີການປະຕິບັດທີ່ເຂັ້ມແຂງຂອງຊຸມຊົນ ແລະ ແລກປ່ຽນຂໍ້ມູນຢ່າງເປັນປົກກະຕິ ລະຫວ່າງບັນດາສະມາຊິກກ່ຽວກັບເລື່ອງທີ່ດິນເພື່ອເພີ່ມບົດບາດສຳຄັນເຂົ້າໃນການຈັດຕັ້ງປະຕິບັດນະໂຍບາຍ